ກະຊວງຍຸຕິທຳ ແຫ່ງສະຫະລັດ
ພະແນກ ສິດທິພົນລະເຮືອນ

# ການປ້ອງກັນຈາກລັດຖະບານກາງຕໍ່ການເລືອກປະຕິບັດຍ້ອນຊາດກຳເນີດ



# ຄຳນຳ

ກົດໝາຍແຫ່ງລັດຖະບານກາງຫ້າມການເລືອກປະຕິບັດ
ຕໍ່ຄົນໃດຄົນໜຶ່ງ ໂດຍອີງຕາມຊາດກຳເນີດ, ເຊື້ອຊາດ,
ຜິວພັນ, ສາສະໜາ, ອາການພິການ, ເພດ
ແລະຖານະຄອບຄົວ. ກົດ ໝາຍທີ່ຫ້າມການ
ເລືອກປະຕິບັດ ກ່ຽວກັບຊາດກຳເນີດ
ໄດ້ເຮັດໃຫ້ການແບ່ງແຍກຊັ້ນວັນນະຍ້ອນບ່ອນກຳເນີດ,
ເຊື້ອ ສາຍ, ວັດທະນະທຳ ຫລືພາສາຂອງບຸກຄົນ
ເປັນຄວາມຜິດກົດໝາຍ.
ຂໍ້ນີ້ໝາຍຄວາມວ່າຄົນໃດຄົນໜຶ່ງບໍ່ສາມາດຖືກປະຕິເສດໂ
ອກາດເທົ່າທຽມກັນ ຍ້ອນເຂົາເຈົ້າ
ຫລືຄອບຄົວຂອງເຂົາເຈົ້າມາຈາກປະເທດອື່ນ,
ຍ້ອນເຂົາເຈົ້າມີຊື່
ຫລືສຳນຽງພາສາທີ່ພົວພັນກັບກຸ່ມຊາດກຳເນີດຊາດໜຶ່ງ,
ຍ້ອນເຂົາເຈົ້າມີຂໍ້ຈຳກັດທາງດ້ານພາສາອັງກິດ,
ຍ້ອນເຂົາເຈົ້າຮ່ວມກັບການປະຕິບັດຮີດຄອງບາງຢ່າງ
ທີ່ພົວພັນກັບກຸ່ມຊາດກຳເນີດອື່ນ,
ຫລືຍ້ອນເຂົາເຈົ້າໄດ້ແຕ່ງງານ
ຫລືພົວພັນກັບຄົນສັນຊາດອື່ນ.

ພະແນກສິດທິພົນລະເຮືອນ ແຫ່ງກະຊວງຍຸຕິທຳ
ມີຄວາມເປັນຫ່ວງວ່າການເລືອກ
ປະຕິບັດຍ້ອນຊາດກຳເນີດ,
ຢູ່ໃນສະຫະລັດອາດບໍ່ຖືກລາຍງານ
ຍ້ອນວ່າຜູ້ຖືກເຄາະຮ້າຍຈາກການເລືອກປະຕິບັດນັ້ນ
ບໍ່ຈັກຮູ້ສິດທິທາງກົດໝາຍຂອງຕົນ
ຫລືອາດຢ້ານກົວໃນການເຮັດຄຳຮ້ອງທຸກຕໍ່ລັດຖະບານ.
ຖ້າທ່ານຄິດວ່າທ່ານ ຫລືຄົນອື່ນທີ່ທ່ານຮູ້ຈັກ ຖືກເລືອກ
ປະຕິບັດຍ້ອນຊາດກຳເນີດ
ແລະຕ້ອງການຮຽນຮູ້ເພີ່ມເຕີມກ່ຽວກັບການຊົມໃຊ້ສິດທາ
ງກົດໝາຍຂອງທ່ານ ທ່ານຄວນອ່ານແຜ່ນພັບສະບັບນີ້.

ແຜ່ນພັບສະບັບນີ້ອະທິບາຍກົດໝາຍການເລືອກ
ປະຕິບັດຍ້ອນຊາດກຳເນີດ ແລະໃຫ້ຕົວຢ່າງບາງຂໍ້.
ທ່ານອາດຫາຂໍ້ມູນເພີ່ມເຕີມກ່ຽວກັບພະແນກສິດທິພົນລະເ
ຮືອນ ແລະພາກສ່ວນຕ່າງໆໄດ້ຢູ່ທີ່:
http://www.justice.gov/crt.
ທ່ານສາມາດຕິດຕໍ່ກັບພະແນກ
ເພື່ອລາຍງານຄຳຮ້ອງທຸກກ່ຽວກັບການເລືອກປະຕິບັດ
ຕາມທີ່ອະທິບາຍຢູ່ຂ້າງລຸ່ມນີ້.

## ການຮູ້ສິດທິທາງກົດໝາຍຂອງທ່ານ

ພະແນກສິດທິພົນລະເຮືອນແຫ່ງກະຊວງຍຸຕິທຳ ໄດ້ບັງຄັບໃຊ້ກົດໝາຍລັດຖະບານກາງທີ່ຫ້າມການເລືອກປະຕິບັດໃນ:

ການສຶກສາ
ການຈ້າງງານ
ການພັກອາໄສເຮືອນ
ການກູ້ຢືມເງິນ
ການຮັບໃຊ້ບໍລິການປະຊາຊົນ
ໜ່ວຍບັງຄັບໃຊ້ກົດໝາຍ/ການຜິດພາດຂອງຕຳຫລວດ
ການລົງຄະແນນສຽງ
ໂປຣແກຣມຊ່ວຍເຫຼືອຂອງຣັຖບານກາງ
ນອກຈາກນີ້ແລ້ວ

ພະແນກນີ້ຍັງໄດ້ບັງຄັບໃຊ້ກົດໝາຍທີ່ຫ້າມການເລືອກປະຕິບັດ ອີງຕາມຄວາມການພິການ, ປົກປ້ອງສິດທິຂອງບຸກຄົນທີ່ເຂົ້າຄຸມຂັງຢູ່ໃນສະຖານທີ່ຕ່າງໆຂອງລັດ ຫລືທ້ອງຖິ່ນບາງແຫ່ງ ແລະດຳເນີນຄະດີຟ້ອງຮ້ອງການຜິດກົດໝາຍອາຍາ ເຊິ່ງເກີດຂຶ້ນຍ້ອນເລື່ອງເຊື້ອຊາດ, ຜິວພັນ ຫລືຊາດກຳເນີດຂອງຜູ້ຮັບເຄາະຮ້າຍ.

ໃນບາງກໍລະນີ ພະແນກນີ້ອາດເຂົ້າຫຍັງກ່ຽວກໍ່ຕໍ່ເມື່ອມີ "ແບບແຜນ ຫລືການປະຕິບັດ" ທີ່ເປັນການເລືອກປະຕິບັດ, "ແບບແຜນ ຫລືການປະຕິບັດ" ໂດຍທົ່ວໄປໝາຍເຖິງວ່າມີເຫດການເລືອກປະຕິບັດຫລາຍກວ່າໜຶ່ງຄັ້ງ, ທັງມີນະໂຍບາຍ ຫລືການປະພຶດທີ່ຊ້ຳໆກັນ ທີ່ເປັນການແບ່ງແຍກຊົ້ນວັນນະ.

## ການຜ່າຝືນອາດຊະຍະກຳ ສິດທິພົນລະເຮືອນ

* ຊາຍໜຸ່ມຄົນໜຶ່ງທີ່ສືບເຊື້ອສາຍຈາກອາຊີໃຕ້ໄດ້ຖືກທຳຮ້າຍຮ່າງກາຍ ເມື່ອລາວອອກຈາກງານດົນຕີຢູ່ທີ່ໄນຄລັບແຫ່ງໜຶ່ງ, ຄົນຮ້າຍເຊິ່ງເປັນສະມາຊິກກຸ່ມອັນຕະພານຜົມສັ້ນໄດ້ຮ້ອງດ່າເຊື້ອຊາດລາວ ໃນຂະນະທີ່ທຸບຕີຜູ້ເຄາະຮ້າຍດ້ວຍກຳປັ້ນ ແລະທົ່ມນ້ຳຢູ່ບ່ອນຈອດລົດຂອງໄນຄລັບ.

* ຢູ່ທີ່ປະຊຸມຂອງ Ku Klux Klan
ສະມາຊິກຄົນໜຶ່ງໄດ້ບອກກັບພັກພວກຄົນອື່ນໆຂອງຕົນວ່າ ຄົນເມັກຊິກັນກັບພວກໂພຣໂຕນີກັນຄວນ
"ກັບຄືນໄປປະເທດຂອງເຂົາ".
ພວກເຂົາເຜົາໄມ້ກາງເຂນຢູ່ເດີ່ນໜ້າບ້ານຂອງຜົວເມຍໜຸ່ມຄົນຣິດສແປນີກຄູ່ໜຶ່ງ ເພື່ອເຮັດໃຫ້ເຂົາເຈົ້າຢ້ານກົວ
ແລະບັງຄັບໃຫ້ເຂົາເຈົ້າໜີຈາກຄຸ້ມບ້ານນັ້ນ,
ກ່ອນເຜົາໄມ້ກາງເຂນ ຈຳເລີຍໄດ້ຊັກປືນອອກມາ
ແລະເອົາປືນອີກກະບອກໜຶ່ງໃຫ້ໝູ່ຂອງລາວ
ເພື່ອວ່າຖ້າຜູ້ເຄາະຮ້າຍພະຍາຍາມຢຸດພວກເຂົາ.

* ບໍລິສັດອາເມຣິກັນແຫ່ງໜຶ່ງ
ໄປຫາຈ້າງຄົນງານໃນເມືອງນ້ອຍແຫ່ງໜຶ່ງໃນປະເທດເມັກຊິໂກ ສັນຍາເຂົາເຈົ້າຈະເອົາງານໃຫ້ເຂົາເຈົ້າ
ພ້ອມທັງຈະຈ່າຍຄ່າແຮງງານສູງໃຫ້,
ແລ້ວບໍລິສັດດັ່ງກ່າວໄດ້ລັກ
ລອບເອົາຄົນເມັກຊິກັນເຂົ້າສະຫະລັດໃນຖັງເປົ່າຂອງລົດບັນທຸກຂອງແຫລວ,
ເມື່ອເຂົາເຈົ້າເຂົ້າມາຮອດສະຫະລັດແລ້ວ
ຄົນງານເຫລົ່ານັ້ນກໍ່ໄດ້ຖືກຂົ່ມຂູ່ວ່າ
ຖ້າເຂົາເຈົ້າພະຍາຍາມໜີຈາກບໍລິສັດ

ເຂົາເຈົ້າຈະຖືກຂ້າຕາຍ.
ຕົວຢ່າງເຫຼົ່ານີ້ສາມາດສະແດງເຖິງອາດຊະຍາກັມຂອງກົດໝາຍສິດພົນລະເຮືອນ.
ກົດໝາຍອາດຊະຍາກຳຂອງພະແນກສິດທິພົນລະເຮືອນດຳເນີນຄະດີຟ້ອງຮ້ອງຕໍ່ສູ້ຄົນທີ່ຖືກກ່າວຫາວ່າໃຊ້ກຳລັງ
ຫລືຄວາມຮຸນແຮງເຂົ້າຂັດຂວາງສິດທິຂອງຄົນ
ເຊິ່ງລັດຖະບານກາງປ້ອງກັນ
ຍ້ອນວ່າຊາດກຳເນີດຂອງເຂົາເຈົ້າ,
ສິດທິເຫລົ່ານີ້ມີຮວມທັງເລື່ອງການພັກອາໄສເຮືອນ,
ການເຮັດວຽກ, ການສຶກສາ
ຫລືການໃຊ້ສະຖາບັນສາທາລະນະ,
ທ່ານຈະສາມາດຕິດຕໍ່ກັບພະແນກອາດຊະຍະກຳໄດ້
ຕາມເລກໂທ (202) 514-3204 ຫລືຂຽນໄປຍັງ:

U.S. Department of Justice
Civil Rights Division
Criminal Section, PHB
950 Pennsylvania Avenue, NW
Washington, D.C. 20530

## ສິດທິຂອງພວກຄົນພິການ

* ສະຖານພະຍາບານ HMO ທີ່ຮັບຄົນເຈັບເມດີເຄດ ໄດ້ບອກຜູ້ຍິງອະເມຣີກັນ ເມັກຊີກັນ ທີ່ສະໝອງພິການໃຫ້ກັບມາມື້ໃໝ່ ເພື່ອມາເອົານັດໝາຍເວລາເຂົ້າພົບທ່ານໝໍ ໃນຂະນະທີ່ໃຫ້ການບໍລິການແກ່ລູກຄ້າຄົນອື່ນທັນທີ.

ເລື່ອງເຊັ່ນຕົວຢ່າງນີ້ ອາດເປັນການຝ່າຝືນກົດໝາຍຂອງລັດຖະບານກາງທີ່ຫ້າມການເລືອກປະຕິບັດຍ້ອນການພິການ ຕະຫລອດທັງກົດໝາຍທີ່ຫ້າມການເລືອກ ປະຕິບັດຍ້ອນຊາດກຳເນີດນຳ. ຖ້າທ່ານເຊື່ອວ່າທ່ານຖືກເລືອກປະຕິບັດຍ້ອນຄວາມພິການ ທ່ານສາມາດຕິດຕໍ່ກັບພະແນກສິດທິຜູ້ພິການໄດ້ ຕາມເລກໂທ (800) 514-0301 (ສາຍປາກ) ຫລື (800) 514-0383 (TTY). ຫຼືຂຽນອີເມລໄປຍັງ ada.complaint@usdoj.gov ນອກນີ້ທ່ານຍັງສາມາດຂຽນໄປຍັງ:

U.S. Department of Justice
Civil Rights Division
Disability Rights Section, NYA
950 Pennsylvania Avenue, NW
Washington, D.C. 20530

## ການສຶກສາ

* ເດັກຜູ້ໜຶ່ງມີບັນຫາດ້ານປາກພາສາອັງກິດ ແຕ່ ໂຮງຮຽນຂອງລາວບໍ່ໄດ້ໃຫ້ຄວາມຊ່ວຍເຫລືອທີ່ເໝາະສົມເພື່ອຊ່ວຍລາວຮຽນພາສາອັງກິດ ແລະວິຊາອື່ນໆ.

* ໂຮງຮຽນໜຶ່ງມີນັກຮຽນສ່ວນຫລາຍເປັນຄົນເຣຕິ ບໍ່ໄດ້ຈັດໃຫ້ມີວິຊາຮຽນສະເພາະນັກຮຽນເກັ່ງ, ໂຮງຮຽນອື່ນໃນເຂດນີ້ ທີ່ບໍ່ມີນັກຮຽນເຣຕິຫລາຍປານໃດນັ້ນ ໄດ້ຈັດໃຫ້ມີວິຊາຮຽນສະເພາະນັກຮຽນເກັ່ງ ແລະນອກນັ້ນກໍ່ຍັງຈັດໃຫ້ນັກຮຽນຜູ້ທີ່ສາມາດຮຽນໄດ້ສູງກວ່າຫລັກສູດປະຈຳຊັ້ນໄດ້ຮຽນພິເສດນຳ.

* ເຈົ້າໜ້າທີ່ໂຮງຮຽນບໍ່ສາມາດຕອບສະໜອງການຮ້ອງຮຽນເມື່ອນັກຮຽນອາຊຽນ-ອາເມລິກັນ ຂອງການລວງລະເມີດທາງດ້ານວາຈາ ແລະ ລວງລະເມີດທາງຮ່າງກາຍ

ໂດຍໝູ່ເພື່ອນນັກຮຽນ.
ຕົວຢ່າງເຫລົ່ານີ້ອາດເປັນການຝ່າຝືນກົດໝາຍຂອງລັດຖະບານກາງ ເຊິ່ງຫ້າມການເລືອກປະຕິບັດ
ໃນໂຮງຮຽນປະຖົມ ແລະມັດທະຍົມ (ມໍຕົ້ນ ແລະ ມໍປາຍ) ພ້ອມກັບວິທະຍາໄລ
ແລະມະຫາວິທະຍາໄລສາທາລະນະ, ໂອກາດທາງດ້ານການສຶກສາ ທີ່ບັງຄັບໃຊ້ໃນພາກສ່ວນນີ້ອີງຕາມ
ຣັຖະບັນຍັດວ່າດ້ວຍໂອກາດທາງດ້ານການສຶກສາທີ່ເທົ່າທຽມກັນ ໂດຍຜ່ານຂໍ້ກີດກັ້ນທາງດ້ານພາສາ ທີ່ຂວາງການຮຽນພາສາອັງກິດ (ELL) ຂອງນັກຮຽນ ຈາກການມີສ່ວນຮ່ວມໃນໂຄງການສຶກສາທີ່ເທົ່າທຽມກັນ. ພາກສ່ວນບັງຄັບໃຊ້ນີ້ຍັງປົກປ້ອງນັກຮຽນຈາກການຄຸກຄາມ ຫຼື ການເລືອກປະຕິບັດທີ່ແຕກຕ່າງກັນ ອີງຕາມປະເທດທີ່ໃຫ້ກຳເນີດພວກເຂົາ.

ສຳຫລັບຂໍ້ມູນເພີ່ມເຕີມລວມທັງຄຳແນະນຳໃນການ. ກະລຸນາເຂົ້າຢ້ຽມຊົມເວັບໄຊທ໌ຂອງພະແນກ www.justice.gov/crt/edo/. ຫຼືທ່ານອາດຕິດຕໍ່ພະແນກໂດຍກົງຕາມເລກໂທ (202) 514- 4092 ຫຼື (877) 292-3804 ຫຼື ອີເມລໄປທີ່ education@usdoj.gov. ທ່ານຍັງສາມາດຂຽນໄປຫາ:

U.S. Department of Justice
Civil Rights Division
Educational Opportunities Section, PHB
950 Pennsylvania Avenue, NW
Washington, D.C. 20530

## ການຈ້າງງານ

*ຫົວໜ້າຄົນງານບໍລິສັດຂົນສົ່ງມັກເວົ້າດູຖູກເຊື້ອຊາດໃສ່ຄົນງານ ຍ້ອນຄອບຄົວລາວມາຈາກປະ ເທດອີຣານ, ອາທິດແລ້ວນີ້ ຫົວໜ້າດັ່ງກ່າວຕິດປ້າຍປອມໃສ່ກະດານບອກທຸກຄົນວ່າຢ່າໄວ້ໃຈຄົນງານຜູ້ນີ້ເພາະລາວເປັນຜູ້ກໍ່ການຮ້າຍ.

* ຜູ້ຍິງຜູ້ໜຶ່ງເຊິ່ງຍ້າຍຖິ່ນມາຈາກປະເທດຣັດເຊຍສະໝັກໜ້າທີ່ເປັນນັກບັນຊີ, ນາຍຈ້າງບໍ່ຍອມຮັບເອົາລາວ

ເພາະລາວປາກພາສາໂດຍມີສຳນຽງ
ເຖິງແມ່ນວ່າລາວມີຄວາມສາມາດດຳເນີນວຽກງານໄດ້
ຕາມໜ້າທີ່ກຳນົດຂອງງານນັ້ນກໍ່ຕາມ.

* ບໍລິສັດປຸງແຕ່ງອາຫານ ໃຫ້ຜູ້ສະໝັກທີ່ມີໜ້າຕາ
ຫລືສຳນຽງທີ່ສະແດງວ່າອາດເປັນຄົນຕ່າງດ້າວໃຫ້ສະແດ
ງໃບອະນຸຍາດໃຫ້ເຮັດວຽກ
ກ່ອນທີ່ຈະອະນຸຍາດໃຫ້ເຂົ້າຊຸມປະກອບໃບສະໝັກໄດ້
ແຕ່ຄົນຂາວທີ່ເກີດໃນປະເທດນີ້ບໍ່ໄດ້ບົ່ງໃຫ້ສະເນີເອກະສ
ານອັນໃດ
ກ່ອນປະກອບບັດໃບສະໝັກເຮັດວຽກ.ອີກຢ່າງເອກະສານ
ຂອງລູກຈ້າງຕ່າງດ້າວມັກຖືກກວດຂັ້ນຢ່າງຖີ່ຖ້ວນກວ່າ
ແລະຖືກປະຕິເສດຫລາຍກວ່າເອກະ ສານແບບດຽວກັນ
ທີ່ຄົນງານຂາວພື້ນເມືອງປະກອບຂື້ນ.

ຕົວຢ່າງເລື່ອງເຫລົ່ານີ້ອາດເປັນການຝ່າຝືນກົດໝາຍຂອງ
ລັດຖະບານກາງ ເຊິ່ງຫ້າມການເລືອກປະຕິບັດຕໍ່ລູກຈ້າງ
ຍ້ອນຊາດກຳເນີດຂອງເຂົາ.
ແນວນີ້ໝາຍຄວາມວ່ານາຍຈ້າງຈະບໍ່ສາມາດລິງວີໄນ,
ລົບກວນ, ໄລ່ອອກວຽກ, ບໍ່ຮັບເອົາຄົນໃດຄົນໜຶ່ງ
ຫລືເລື່ອນຊັ້ນໃຫ້ຄົນໃດຄົນໜຶ່ງຍ້ອນຊາດກຳເນີດຂອງເຂົ
າເຈົ້າ.

ຖ້າທ່ານເຊື່ອວ່ານາຍຈ້າງ, ອົງການຈັດຕັ້ງແຮງງານ
ຫຼືອົງການຫາງານແບ່ງແຍກຊັ້ນວັນນະຕໍ່ທ່ານ
ຍ້ອນຊາດກຳເນີດຂອງທານ ໃຫ້ຕິດຕໍ່ກັບ:

ຄະນະກຳມາທິການ
ວ່າດ້ວຍໂອກາດເຮັດວຽກເທົ່າທຽມກັນ
(800) 669-4000
(ນາຍຈ້າງທີ່ມີລູກຈ້າງ 15 ຄົນຂື້ນໄປ)

ສຳນັກງານທະນາຍຄວາມພິເສດ:
(800) 255-7688

U.S. Department of Justice
Civil Rights Division
Office of Special Counsel for Immigration-Related
Unfair Employment Practices, NYA
950 Pennsylvania Avenue, NW
Washington, D.C. 20530

osccrt@usdoj.gov
(ນາຍຈ້າງທີ່ມີລູກຈ້າງ 4 ຫາ 14 ຄົນຂຶ້ນໄປ)

ພະແນກຄະດີວຽກງານ
Employment Litigation Section
(202) 514-3831

U.S. Department of Justice
Civil Rights Division
Employment Litigation Section, PHB
950 Pennsylvania Avenue, NW
Washington, D.C. 20530
(ນາຍຈ້າງລັດຖະບານລັດ
ຫລືທ້ອງຖິ່ນທີ່ມີແບບການດຳເນີນ
ຫລືການປະຕິບັດອັນເປັນການ ເລືອກ
ປະຕິບັດທີ່ຜິດກົດໝາຍ)

ນອກຈາກນີ້ນາຍຈ້າງກໍ່ອາດຝ່າຝືນກົດໝາຍຂອງລັດຖະບານກາງໄດ້ ໂດຍບັງວາ
ໃຫ້ຜູ້ສະໝັກງານເອົາໜັງສືອະນຸຍາດເຮັດວຽກງານອັນໃດອັນໜຶ່ງໃຫ້ເບິ່ງເຊັ່ນບັດຂຽວ, ຫລືບໍ່ເອົາເອກະສານດັ່ງກາວພຽງແຕ່ວາຜູ້ສະໝັກມີຊາດກຳເນີດມາຈາກບາງປະເທດເທົ່ານັ້ນ. ເພື່ອເອົາຂໍ້ມູນເພີ່ມເຕີມ ຫລືຍື່ນຄຳຟ້ອງຮ້ອງ ໃຫ້ຕິດຕໍ່ກັບສຳນັກງານ
ທະນາຍຄວາມພິເສດຂອງພະແນກຕາມທີ່ຢູ່ຂ້າງເທິງນີ້ ຫລືຕາມເລກໂທລະສັບນັ້ນ.

## ການພັກອາໄສເຮືອນ

* ໃນເວລາທີ່ຄົນພື້ນເມືອງຮາວາຍ
ກຳລັງຊອກຫາຫ້ອງແຖວພັກຢູ່ນັ້ນ,
ຕົວແທນຜູ້ໃຫ້ເຊົ່າໄດ້ບອກເຂົາເຈົ້າວ່າ
ບໍ່ມີຫ້ອງແຖວໃຫ້ເຊົ່າແລ້ວ
ເຖິງແມ່ນວ່າມີຫ້ອງແຖວໃຫ້ເຊົ່າຄົນຜິວຂາວເຂົ້າເບິ່ງ
ແລະເຊົ່າກໍ່ຕາມ.

* ຜູ້ຂາຍເຮືອນພາຄອບຄົວລາຕິໂນໄປເບິ່ງເຮືອນ
ທີ່ຕັ້ງຢູ່ສະເພາະແຕ່ໃນເຂດຄົນລາຕິໂນຢູ່ມາກ່ອນເທົ່ານັ້ນ
ແລະບໍ່ຍອມພາຄອບຄົວນັ້ນໄປເບິ່ງເຮືອນໃນເຂດຜິວຂາວ.

ເລື່ອງຕົວຢ່າງເຫລົ່ານີ້ອາດເປັນການຝ່າຝືນກົດບັນຍັດການພັກອາໄສເຮືອນເທົ່າທຽມກັນຂອງລັດ ຖະບານກາງ. ກົດໝາຍນັ້ນຫ້າມການເລືອກ
ປະຕິບັດກ່ຽວກັບການພັກອາໄສເຮືອນ ຍ້ອນຊາດກຳເນີດ, ເຊື້ອຊາດ, ເພດ, ສາສະໜາ, ອາການພິການ
ຫລືຖານະຄອບຄົວ (ມີລູກທີ່ມີອາຍຸຕ່ຳກວ່າ 18 ປີ), ທ່ານຈະສາມາດລາຍງານການແບ່ງແຍກຊັ້ນວັນນະໃຫ້ກົມວ່າດ້ວຍການພັກອາໄສເຮືອນ ແລະ ພັດທະນາຕົວເມືອງ (HUD) ຕາມເລກໂທ (800) 669-9777. ຖ້າທ່ານເຊື່ອວ່າ ມີການກະທຳດັ່ງກ່າວເປັນປະຈຳ
ຫລືມີການປະຕິບັດການແຍກຊັ້ນວັນນະ
ໃຫ້ຕິດຕໍ່ກັບພະແນກບັງຄັບການພັກພາອາໄສເຮືອນ ແລະສິດທິພົນລະເຮືອນໄດ້ຕາມເລກໂທ (202) 514-4713 ຫຼື (800) 896-7743 ຫຼື ອີເມລໄປທີ fairhousing@usdoj.gov. ຫຼື ສາມາດຂຽນໄປຍັງ.

U.S. Department of Justice
Civil Rights Division
Housing and Civil Enforcement Section, NWB
950 Pennsylvania Avenue, NW
Washington, D.C. 20530

## ການກູ້ຢືມ

* ຜູ້ຍິງລາຕິນາຜູ້ໜຶ່ງຖືກເກັບຄ່າດອກເບ້ຍສູງກວ່າ ແລະຈ່າຍຄ່າທຳນຽມສູງກວ່າລູກຄ້າຜູ້ຊາຍຂາວຜູ້ມີປະຫວັດການເງິນຢ່າງດຽວ ແລະຂໍຢືມເງິນແບບດຽວກັນ.

ເລື່ອງແບບຕົວຢ່າງເຫລົ່ານີ້
ອາດເປັນການຝ່າຝືນກົດໝາຍຂອງລັດຖະບານກາງ ເຊິ່ງຫ້າມການ ເລືອກ
ປະຕິບັດໃນການກູ້ຢືມຍ້ອນຊາດກຳເນີດ, ເຊື້ອຊາດ, ເພດ, ສາສະໜາ, ອາການພິການ ຫລືຖານະການແຕ່ງງານ ຫລືຍ້ອນວ່າລາຍໄດ້ແນວໃດໆຂອງບຸກຄົນນັ້ນ ເຊິ່ງໄດ້ມາຈາກກຸ່ມຊ່ວຍເຫລືອສາທາລະນະ ຫລືບໍ່. ຖ້າທ່ານເຊື່ອວ່າ ທ່ານເຄີຍຖືກປະຕິເສດບໍ່ໃຫ້ໄດ້ຮັບເງິນກູ້ຍ້ອນຊາດກຳເນີດ ຫລືຍ້ອນສາເຫດອື່ນທີ່ມີການປ້ອງກັນ, ທ່ານຈະສາມາດຂໍໃຫ້ຜູ້ໃຫ້ຢືມ
ອະທິບາຍເປັນລາຍລັກອັກສອນສາເຫດເຊິ່ງເຂົາເຈົ້າປະຕິເສດຄວາມຮ້ອງຂໍຂອງທ່ານ.

ຖ້າເງິນຢືມນັ້ນຫາກແມ່ນສຳລັບການຊື້ເຮືອນ
ເພື່ອການດັດແປງເຮືອນ
ຫຼືເລື່ອງອື່ນນີ້ກ່ຽວກັບການພັກອາໄສເຮືອນ,
ທ່ານກໍ່ສາມາດຍື່ນຄຳຮ້ອງທຸກໄປຍັງກົມເຄຫາສະຖານ
ແລະການພັດທະນາຕົວເມືອງຕາມເລກໂທ
(800) 669-9777,
ຖ້າການກູ້ຢືມແມ່ນເພື່ອຈຸດປະສົງແນວອື່ນນອກເໜືອຈາກ
ເຮືອນຊານ (ເຊັ່ນການຢືມໄປຊື້ລົດ),
ທ່ານກໍ່ອາດຍື່ນຄຳຮ້ອງທຸກໄປຍັງກົມເຄຫາສະຖານ
ແລະພະແນກສິດທິພົນລະເຮືອນ
ຫຼືອົງການຮັກສາກົດລະບຽບເລື່ອງກູ້ຢືມໄດ້,
ຖ້າປະສົບການຂອງທ່ານຫາກເປັນການໄດ້ຮັບເຄາະມາເປັ
ນປະຈຳ ຫລືຍອນການປະຕິບັດການແຍກຊັ້ນວັນນະ
ທ່ານສາມາດໂທຫາພະແນກການພັກພາອາໄສເຮືອນ
ແລະສິດທິພົນລະເຮືອນໄດ້ ເລກໂທ (202) 514-4713 ຫຼື
(800) 896-7743, ຫຼືໂດຍອີເມລທີ່
fairhousing@usdoj.gov, ທ່ານອາດຂຽນໄປທີ່:

U.S. Department of Justice
Civil Rights Division
Housing and Civil Enforcement Section, NWB
950 Pennsylvania Avenue, NW
Washington, D.C. 20530

## ການຮັບໃຊ້ບໍລິການປະຊາຊົນ

* ຢູ່ໃນຮ້ານອາຫານແຫ່ງໜຶ່ງ
ພວກອາເມຣິກັນເອເຊຍໄດ້ໄປນັ່ງລໍຖ້າການບໍລິການເປັນເ
ວລາຊົ່ວໂມງກວ່າ ໃນເມື່ອລູກຄ້າຄົນຂາວ
ແລະຄົນລາທິໂນ ຮັບການບໍລິການໂດຍທັນທີ.

* ຄົນອະເມຣິກັນເຊື້ອສາຍເຣຕິທີ່ໄປໂຮງແຮມ
ໄດ້ຖືກບອກວ່າລາວຕ້ອງຈ່າຍເງິນສົດແທນທີ່ຈະໃຊ້ບັດ
ເຄຣດິດ. ຖືກໃຫ້ຈ່າຍຄ່າຫ້ອງສູງກວ່າລູກຄ້າຄົນອື່ນ
ແລະບໍ່ໄດ້ຮັບການບໍລິການຢ່າງດຽວກັນກັບຄົນອື່ນໆ
ເຊັ່ນຜ້າເຊັດຕົວ ແລະສະບູກໍ່ບໍ່ຄືກັນ.

ເລື່ອງເຊັ່ນຕົວຢ່າງນີ້ອາດເປັນການຝ່າຝືນກົດໝາຍຂອງລັ
ດຖະບານກາງ ທີ່ຫ້າມການເລືອກປະຕິບັດ
ຕາມຊາດກຳເນີດ, ເຊື້ອຊາດ

ຫລືສາສະໜາໃນສະຖານທີ່ຮັບໃຊ້ບໍລິການປະຊາຊົນ,
ບ່ອນຮັບໃຊ້ບໍລິການປະຊາຊົນຮວມມີທັງໂຮງແຮມ,
ຮ້ານອາຫານ ແລະສະຖານທີ່ບັນເທີງ.
ຖ້າທ່ານເຊື່ອວ່າທ່ານໄດ້ຖືກປະຕິເສດການເຂົ້າຫາ
ຫລືການຊົມໃຊ້ການຮັບໃຊ້ບໍລິການປະຊາຊົນ
ບ່ອນທີ່ມີແບບແຜນ
ຫລືການປະຕິບັດຂອງການແບ່ງແຍກຊັ້ນວັນນະ,
ໃຫ້ຕິດຕໍ່ກັບພະແນກການພັກພາອາໄສເຮືອນ
ແລະບັງຄັບໃຊ້ສິດທິພົນລະເຮືອນໄດ້ ເລກໂທ (202)
514-4713, ຫຼື (800) 896-7743, ຫຼື ໂດຍອີເມລ
fairhousing@usdoj.gov.
ນອກນີ້ທ່ານຍັງສາມາດຂຽນໄປຫາ:

U.S. Department of Justice
Civil Rights Division
Housing and Civil Enforcement Section, NWB
950 Pennsylvania Avenue, NW
Washington, D.C. 20530

## ການປະພຶດຢ່າງບໍ່ເໝາະສົມຂອງຕຳຫລວດ

*ເຈົ້າໜ້າທີ່ຕຳຫລວດມັກສັ່ງໃຫ້ລົດທີ່ຂັບໂດຍພວກລາຕິນ
ໄປຈອດຢູ່ສະເໝີຍ້ອນການລະເ
ມີດກົດລະບຽບຈາລະຈອນບາງຂໍ້
ແຕ່ວ່າໜ້ອຍສຸດທີ່ຈະສັ່ງໃຫ້ຜູ້ຂັບຄົນຂາວຈອດລົດ
ຍ້ອນການລະເມີດກົດລະບຽບຂໍ້ດຽວກັນ.

* ເຈົ້າໜ້າທີ່ຕຳຫລວດຄົນໜຶ່ງໃຈຮ້າຍ
ໃນຂະນະທີ່ສອບຖາມຊາຍເຊື້ອຊາດຫວຽດນາມຄົນໜຶ່ງຢູ່
ໃນຖະໜົນ
ເມື່ອຊາຍຄົນດັ່ງກ່າວບໍ່ສາມາດຕອບຄຳຖາມຂອງລາວ
ຍ້ອນວ່າລາວປາກພາສາອັງກິດບໍ່ເປັນ
ເຈົ້າໜ້າທີ່ກໍ່ເລີຍຈັບກຸມຊາຍຄົນນັ້ນໃນເຫດຜົນທີ່ວ່າປະພຶ
ດຜິດລະບຽບ.

ເລື່ອງເຊັ່ນຕົວຢ່າງນີ້ອາດເປັນການຝ່າຝືນກົດໝາຍຄວາມ
ສະເໝີພາບຂອງລັດຖະທຳມະນູນແຫ່ງສະຫະລັດ.
ນອກຈາກນັ້ນແລວ
ມັນຍັງອາດເປັນການຝ່າຝືນກົດບັນຍັດວ່າດ້ວຍການຄວບ
ຄຸມອາດຊະ ຍາກຳ

ແລະມາດຕາວ່າດ້ວຍຖະໜົນປອດໄພຂອງປີ 1968 ນຳອີກ. ກົດໝາຍນັ້ນຫ້າມການເລືອກປະຕິບັດ ຕາມຊາດກຳເນີດ, ເຊື້ອຊາດ ຫລືເພດຈາກກົມຕຳຫລວດທີ່ໄດ້ທຶນຈາກລັດຖະບານກາງ ໂດຍຜ່ານທາງກະຊວງຍຸຕິທຳ. ນອກຈາກນັ້ນ ມັນຍັງອາດເປັນການຝ່າຝືນກົດໝາຍມາດຕາ VI ຂອງກົດໝາຍສິດທິພົນລະເຮືອນຂອງປີ 1964 ນຳອີກ, ເຊິ່ງຫ້າມການເລືອກ ປະຕິບັດຈາກຫ້ອງການບັງຄັບກົດໝາຍ ເຊິ່ງໄດ້ຮັບທຶນຊ່ວຍເຫລືອໃດນຶ່ງຂອງລັດຖະບານກາງ ຮວມທັງການຮັບຊັບສິນນຳ. ນີ້ລວມທັງໜ່ວຍງານທາງກົດໝາຍຂອງລັດ ແລະ ທ້ອງຖິ່ນທັງໝົດ

ການຮ້ອງທຸກເລື່ອງການເລືອກ ປະຕິບັດຕໍ່ບຸກຄົງສາມາດເຮັດໄດ້ທີ່ ພະແນກປະສານງານການ ແລະຮ້ອງທຸກຂອງລັດຖະບານສູນກາງໄດ້ທີ່

U.S. Department of Justice
Civil Rights Division
Federal Coordination and Compliance Section, NWB
950 Pennsylvania Avenue, NW
Washington, D.C. 20530

ຫລືຕິດຕໍ່ຫາພະແນກປະສານງານ ແລະ ຮ້ອງທຸກຂອງລັດຖະບານກາງຕາມເລກໂທ (888) 848-5306 or (202) 307-2678 (TDD)

ຄຳຮ້ອງທຸກເລື່ອງການແບ່ງແຍກຊັ້ນວັນນະຂອງບຸກຄົນຍັງສາມາດຖືກຍື່ນກັບສຳນັກງານໂຄງ ການຍຸຕິທຳເພື່ອສິດທິພົນລະເຮືອນ Office of Justice Programs, U.S. Department of Justice, Washington,D.C.20531 ຫລືຕິດຕໍ່ຫາພະແນກປະສານງານໂຄງການຍຸຕິທຳ ແລະທົບທວນ ຕາມເລກໂທ (202) 307-0690.

ພະແນກດຳເນີນຄະດີພິເສດໄດ້ສືບສວນ ແລະດຳເນີນຄະດີຄຳຮ້ອງທຸກວ່າ ກົມຕຳຫລວດມີແບບ ແຜນ ຫລືການປະຕິບັດອັນດໍປັນການແບ່ງແຍກຊັ້ນວັນນະ ອີງຕາມຊາດກຳເນີດ ເພື່ອຍື່ນຄຳຮ້ອງທຸກໃຫ້ ຕິດຕໍ່ກັບພະແນກດຳເນີນຄະດີພິເສດຕາມເລກໂທ

(202) 514-6255 ຫຼື (877) 218-5228.  ຫລືຂຽນຫາ:

U.S. Department of Justice
Civil Rights Division
Special Litigation Section, PHB
950 Pennsylvania Avenue, NW
Washington, D.C. 20530

## ສິດທິພົນລະເຮືອນຂອງຜູ້ຖືກຄຸມຂັງ ຫລືກຳລັງໄດ້ຮັບການປິ່ນປົວຢູ່

*ຄຸກແຫ່ງໃດແຫ່ງໜຶ່ງຈະບໍ່ຍອມແປການພິຈາລະນາເລື່ອງການລົງວິໄນແກ່ຜູ້ຖືກຄຸມຂັງທີ່ປາກພາສາອັງກິດບໍ່ເປັນ.

*ໂຮງໝໍໂລກຈິດຂອງລັດຈະບໍ່ມີຊ່ອງທາງໃຫ້ແກ່ການປິ່ນປົວກັບຄົນທີ່ປາກພາສາອັງກິດບໍ່ເປັນ ເລື່ອງເຊັ່ນໃນຕົວຢ່າງເຫລົ່ານີ້ ອາດເປັນການຝ່າຝືນກົດໝາຍຄວາມສະເໝີພາບຂອງລັດຖະທຳມະນູນ ແຫ່ງສະຫະລັດ.

ພະແນກດຳເນີນຄະດີພິເສດຮັບບັງຄັບໃຊ້ສິດທິລັດຖະທຳມະນູນຂອງຄົນທີ່ຖືກຄຸມຂັງໃນສະຖານທີ່ຕ່າງໆຂອງລັດ ຫລືລັດຖະບານທ້ອງຖິ່ນ ເຊັ່ນຄ້າຍຄຸມຂັງ, ຄຸກ, ສູນຄຸມຂັງເບື້ອງຕົ້ນ, ຄ້າຍດັດສັນດານ, ເຮືອນພະຍາບານຂອງລັດ, ແລະ ສະຖານບຳບັດຄົນພິການທາງຮ່າງກາຍ ແລະ ການພັດທະນາທາງສະຕິປັນຍາ

ຖ້າທ່ານເປັນຄົນອາໄສຢູ່ບ່ອນດັ່ງກ່າວ ແລະທ່ານເຊື່ອວ່າມີການກະທຳອັນເປັນຮູບແບບ ຫລືມີການປະຕິບັດການທີ່ແບ່ງຊັ້ນວັນນະ, ອີງຕາມຊາດກຳເນີດ ໃຫ້ຕິດຕໍ່ກັບພະແນກດຳເນີນຄະດີພິເສດ ຕາມເລກໂທ (202) 514-6255 ຫຼື (877) 218-5228. ທ່ານຍັງສາມາດຂຽນໄປຫາ:

U.S. Department of Justice
Civil Rights Division
Special Litigation Section, PHB
950 Pennsylvania Avenue, NW
Washington, D.C. 20530

# ໂຄງການທີ່ໄດ້ຮັບຄວາມຊ່ວຍເຫລືອຈາກລັດຖະບານກາງ

* ອົງການບໍລິການສັງຄົມທ້ອງຖິ່ນ ບໍ່ຍອມໃຫ້ຂໍ້ມູນ
ຫລືການຝຶກຝົນອາຊີບເປັນພາສາເກົາຫລີ
ເຖິງແມ່ນວ່າປະຊາຊົນໃນເຂດທ້ອງຖິ່ນໜຶ່ງສ່ວນສີ່ຈະປາກ
ໄດແຕພາສາເກົາຫລີກໍ່ຕາມ.

*ໂຮງໝໍແຫ່ງໜຶ່ງໃນເຂດທີ່ມີປະຊາກອນຊາງລາຕິໂນຈຳ
ນວນຫຼວງຫຼາຍ,
ພະນັກງານພະແນກຄົນປ່ວຍນອກມັກເວົ້າຕະຫລົກ ຫລື
ເວົ້າເຖິງສຳນຽງການເວົ້າຂອງຄົນປ່ວຍຊາວລາຕິໂນ,
ແລະໃຫ້ບໍລິການແກ່ຊາວລາຕິໂນຊັກຊ້າ.
ຄົນໄຂ້ຊາວລາຕິໂນຖືກບອກໃຫ້ນຳຄົນແປພາສາມາເອງກ່
ອນພົບກັບທານໝໍ.

ເລື່ອງເຊັ່ນຕົວຢ່າງເຫລົ່ານີ້ອາດຜິດກົດໝາຍຂອງລັດຖະບ
ານກາງ
ເຊິ່ງຫ້າມການແບ່ງແຍກຊັ້ນວັນນະຍ້ອນຊາດກຳເນີດ,
ເຊື້ອຊາດ ຫລືຜິວພັນ
ໂດຍແຜນງານທີ່ໄດ້ຮັບເງິນທຶນຊ່ວຍເຫລືອຂອງລັດຖະບ
ານກາງ. ຖາທານເຊື່ອວາ
ທານເຄີຍຖືກແບ່ງແຍກຊັ້ນວັນນະ ໂດຍເຮັດ
ຫລືອົງການລັດຖະບານທອງຖິ່ນ
ຫລືອົງການທີ່ໄດ້ຮັບເງິນທຶນຈາກລັດຖະບານກາງ,
ທານສາມາດຍື່ນຄຳຮ້ອງທຸກໄດ້ກັບພະແນກປະສານງານ
ແລະ ຮ້ອງທຸກຂອງລັດຖະບານກາງ ຕາມເລກໂທ
(888) 848-5306 ຫຼື (202) 307-2678 (TDD).
ທານຍັງສາມາດຂຽນໄປຫາ:

U.S. Department of Justice
Civil Rights Division
Federal Coordination and Compliance Section, NWB
950 Pennsylvania Avenue, NW
Washington, D.C. 20530

ຈະສົ່ງຄຳຮ້ອງທຸກໄປຕໍ່ທີ່ອົງການລັດຖະບານກາງທີ່ໃຫ້ເງິ
ນທຶນ
ແລະທີ່ມີໜ້າທີ່ຮັບຜິດຊອບຂັ້ນຕົ້ນຕໍ່ການບັງຄັບການຫ້າມ
ການແບ່ງແຍກຊັ້ນວັນນະທີ່ກ່ຽວກັບຜູ້ຮັບຄວາມຊ່ວຍເຫລື
ອຈາກເຂົາເຈົ້າ.
ການລົງຄະແນນສຽງ

## ພະແນກປະສານງານ ແລະຮ້ອງທຸກຂອງລັດຖະບານກາງ

*ເຖິງແມ່ນຈະມີການຮ້ອງຂໍຈາກຜູ້ລົງຄະແນນສຽງໃນມວ
ນຊົນຄົນປາກພາສາສະເປນ
ນິດສແຫ່ງໜຶ່ງຈຳນວນຫລວງຫລາຍກໍ່ຕາມ,
ເຈົ້າໜ້າທີ່ກຳກັບການລົງຄະແນນສຽງກໍ່ບໍ່ຍອມໃຫ້ອຸປະກ
ອນການເລືອກຕັ້ງເຊິ່ງ ຮວມມີຟອມຈົດຊື່ລົງທະບຽນ
ແລະຕົວຢ່າງບັດລົງຄະແນນສຽງເປັນພາສາສະເປນນິດສ
ຫລືອະນຸຍາດໃຫ້ຜູ້ປາກພາສາສະເປນນິດສ
ນຳເອົານາຍພາສາເຂົ້າໄປໃນຫ້ອງລົງຄະແນນສຽງໄດ້.

*ເຈົ້າໜ້າທີ່ກຳກັບການລົງຄະແນນສຽງບັງໃຫ້ຜູ້ລົງຄະແນ
ນສຽງຜິວດຳ ເຊິ່ງປາກເປັນສຳນຽງຕ່າງດ້າວ
ແລະມີນາມສະກຸນທີ່ແປກໆ
ໃຫ້ຍື່ນຫລັກຖານພິສູດສັນຊາດອະເມຣິກັນ
ແຕ່ບໍ່ໄດ້ບັງຄັບໃຫ້ຄົນຜິວຂາວພິສູດສັນຊາດ.

ພາກສ່ວນອອກສຽງສາມາມດຳເນີນການ ເພື່ອແກ້ໄຂ
ບັນຫາຕົວຢ່າງເຫຼົ່ານີ້, ກົດໝາຍຣັຖບານກາງ
ເຊິ່ງຫ້າມການເລືອກປະຕິບັດ ລວມທັງ ການອອກຂົ່ມຂູ່
ແລະ ຄຸກຄາມຜູ້ລົງຄະແນນສຽງ ຕາມເຊື້ອຊາດ ຫຼື ເພາະ
ພວກເຂົາເວົ້າພາສາກຸ່ມນ້ອຍ ນອກຈາກນີ້ ຣັຖບານກາງ
ຍັງຕ້ອງໃຫ້ຜູ້ມີອຳນາດຕ້ອງຈັດຫາວັດສະດຸໃນການເລືອກ
ຕັ້ງເປັນພາສາຂອງຄົນກຸ່ມນ້ອຍ ເພື່ອໃຫ້ຜູ້ທີ່ມີຂໍ້ຈຳກັດ
ທາງດ້ານພາສາໃຫ້ຜູ້ອອກຄະແນນສຽງຊາບ ແລະ ມີ
ປະສິດທິພາບ.ກົດໝາຍເຫຼົ່ານີ້ຍັງໃຫ້ຜູ້ລົງຄະແນະທີ່
ຕ້ອງການຄວາມຊ່ວຍເຫຼືອອ່ານການລົງຄະແນະສຽງ ຫຼື
ວັດສະດຸ ແລະ ສິດຕ່າງໆ ໃຫ້ໄດ້ຮັບການຊ່ວຍເຫຼືອຈາກຜູ້
ທີ່ພວກເຂົາເລືອກ (ນອກເໜືອຈາກຕົວແທນຈາກນາຍຈ້າງ
ຫຼື ສະຫະພາບແຮງງານໄດ້). ນອກຈາກນີ້ຣັຖບານກາງ ຫຼື
ເຈົ້າໜ້າທີ່ສັງເກດການ ລົງມາກວດກາມື້ເລືອກ
ຕັ້ງເພື່ອຕອບບັນຫາຄວາມກັງວົນກ່ຽວກັບການເລືອກປະຕິ
ບັດໃນການອອກຄະ ແນນສຽງ ແລະ

ການຂາດແຄນການນຳໃຊ້ພາສາຂອງຊົນກຸ່ມນ້ອຍ ເຊັ່ນ: ສາມາດດຳເນີນການໄປຕາມວິທີການເລືອກຕັ້ງໃນເຂດທີ່ໃຫຍ ຫຼືທຳລາຍການອອກສຽງຂອງຊົນກຸ່ມນ້ອຍ.

ຖ້າທ່ານເຊື່ອວ່າທ່ານຖືກແບ່ງແຍກຊັ້ນວັນນະໃນການລົງຄະແນນສຽງ
ຫລືຖືກປະຕິເສດຄວາມຊ່ວຍເຫລືອໃນການລົງຄະແນນສຽງ,
ທ່ານສາມາດຕິດຕໍ່ກັບພະແນກກຳກັບການລົງຄະແນນສຽງຂອງກົມໄດ້ທີ່ເລກໂທ: (800) 253-3931, ຫຼື ທາງອີເມລທີ່ voting.section@usdoj.gov
ທ່ານສາມາດຂຽນໄປຫາ:

U.S. Department of Justice
Civil Rights Division
Voting Section, NWB
950 Pennsylvania Avenue, NW
Washington, D.C. 20530

ເມື່ອທ່ານໂທຫາທຸກສຳນັກງານທີ່ມີຢູ່ໃນລາຍການໃນແຜ່ນພັບນີ້, ໂທລະສັບຈະຕອບຮັບເປັນພາສາອັງກິດ. ຖ້າຫາກທ່ານຕ້ອງການພາສາແປ, ບອກຜູ້ຮັບສາຍວ່າທ່ານເວົ້າເປັນພາສາຫຍັງ. ຜູ້ຮັບສາຍຈະໃຫ້ທ່ານຖືສາຍຖ້າລະຫວ່າງຫາຜູ້ແປ. ກະລຸນາຢ່າວາງສາຍ. ຜ່ານການບໍລິການແປພາສາ ພວກເຮົາມີຄວາມພ້ອມໃຫ້ການຊ່ວຍເຫຼືອແປໄດ້ທຸກພາສາ.

ໝາຍເຫດ: ສຳລັບຄົນທີ່ມີອາການພິການ,
ເອກະສານນີ້ຈະມີໃຫ້ເປັນແບບຕົວອັກສອນໃຫຍ່ໆ,
ເທັບຄະແຊັດ, ແຜ່ນຄອມພິວເຕີ
ແລະໂຕອັກສອນສຳລັບຄົນຕາບອດ.

ທ່ານສຳມາດເຮັດສຳເນົານີ້ໄດ້.

ພິມອອກໃນເດືອນສິງຫາ, 2010

# Federal Protections Against National Origin Discrimination

## Laotian

www.justice.gov/crt




**United States Department of Justice**
Civil Rights Division

950 Pennsylvania Avenue, NW
Washington, D.C. 20530